ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 279 /ສສກ
ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2023

ບົດລາຍງານ

ຮຽນ : ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,
ເລື່ອງ : ລາຍງານຜົນສຳເລັດ ການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 32 ທີ່ຣາຊອານາຈັກກຳປູເຈຍ ເປັນເຈົ້າພາບ ລະຫວ່າງວັນທີ 05-17 ພຶດສະພາ 2023.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 968/ຫສນຍ, ລົງວັນທີ 26 ພຶດສະພາ 2023 ມອບໃຫ້ກະຊວງ ສສກ ສະຫຼຸບລາຍງານ ແລະ ຍ້ອງຍໍ ໃຫ້ຄະນະນຳ, ຄູຝຶກ ແລະ ນັກກິລາລາວ ທີ່ສຳເລັດການເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 32;
ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1731/ຫສນຍ, ລົງວັນທີ 23 ພະຈິກ 2022 ເຫັນດີອະນຸມັດສົ່ງຄະນະກິລາລາວ ເຂົ້າຮ່ວມແຂ່ງຂັນກິລາໃນລາຍການ ລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ປະຈຳປີ 2023;
ອີງຕາມ ແຈ້ງການຂອງກະຊວງການຕ່າງປະເທດ ສະບັບເລກທີ 1388/ຕປທ.ອປອ, ລົງວັນທີ 29 ມີນາ 2023 ແລະ ສະບັບເລກທີ 1629/ຕປທ.ອປອ, ລົງວັນທີ 19 ເມສາ 2023;
ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 1249/ສສກ, ລົງວັນທີ 04 ເມສາ 2022 ແລະ ສະບັບເລກທີ 1415/ສສກ, ລົງວັນທີ 25 ເມສາ 2023.

ກົມກິລາລະດັບສູງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ຊາບກ່ຽວກັບຜົນສຳເລັດການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 32 ທີ່ຣາຊອານາຈັກກຳປູເຈຍ ໄດ້ຮັບກຽດເປັນເຈົ້າພາບ ລະຫວ່າງວັນທີ 05-17 ພຶດສະພາ 2023 ໂດຍສັງເຂບ ດັ່ງນີ້ :

I. ສະພາບລວມ :

ງານມະຫາກຳກິລາຊີເກມ ແມ່ນການແຂ່ງຂັນກິລາລະຫວ່າງບັນດາປະເທດອາຊຽນ ຊຶ່ງຈັດຂຶ້ນທຸກໆສອງປີໃດ ຈັດຂຶ້ນໜຶ່ງຄັ້ງ ໂດຍຜັດປ່ຽນແຕ່ລະປະເທດເປັນເຈົ້າພາບ. ຜ່ານມາຄະນະກິລາລາວເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31 ປີ 2022 ທີ່ ສ.ສ ຫວຽດນາມ ເປັນເຈົ້າພາບ, ສາມາດຍາດໄດ້ຫຼຽນຄຳ 02 ຫຼຽນ, ຫຼຽນເງິນ 07 ຫຼຽນ ແລະ ຫຼຽນທອງ 33 ຫຼຽນ ລວມທັງໝົດ 42 ຫຼຽນ, ຈັດຢູ່ໃນອັນດັບທີ 09 ຈາກ 11 ປະເທດເຂົ້າຮ່ວມແຂ່ງຂັນ.

Scanned with CamScanner

ສໍາລັບການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນງານມະຫະກໍາກິລາຊີເກມ ຄັ້ງທີ 32 ປີ 2023 ຂອງຄະນະກິລາ ລາວ ລະຫວ່າງວັນທີ 05-17 ພຶດສະພາ 2023 ທີ່ຈັດຂຶ້ນທີ່ຣາຊອານາຈັກກໍາປູເຈຍ ເປັນເຈົ້າພາບ. ໄດ້ບັນຈຸກິລາ ຈໍານວນທັງໝົດ 46 ປະເພດ ຊຶ່ງແບ່ງອອກເປັນ 03 ໝວດກິລາ ຄື : 1) ກິລາພາກບັງຄັບ, 2) ກິລາທີ່ຖືກບັນຈຸຢູ່ໃນ ການແຂ່ງຂັນກິລາໂອແລມປິກ ແລະ ກິລາເອຊຽນເກມ ແລະ 3) ກິລາທີ່ມີເອກະລັກປະຈໍາຊາດ.

ກົມກິລາລະດັບສູງ ໄດ້ຮ່ວມກັບ ຄະນະກໍາມະການໂອແລມປິກແຫ່ງຊາດລາວ ແລະ ບັນດາສະຫະພັນກິລາ ແຫ່ງຊາດທີ່ເປັນເປົ້າໝາຍ, ໄດ້ຈັດກອງປະຊຸມປຶກສາຫາລື ແລະ ຄົ້ນຄວ້າ ປະເພດກິລາທີ່ເປັນປາຍແຫຼມຕາມຍຸດທະ ສາດ, ປະເພດກິລາທີ່ເຄີຍຍາດໄດ້ຫຼຽນຜ່ານມາ ຈາກການເຂົ້າຮ່ວມແຂ່ງຂັນງານມະຫາກໍາກິລາຊີເກມ ຄັ້ງທີ 31 ທີ່ ສ.ສ ຫວຽດນາມ, ລາຍການອື່ນໆ ລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແລະ ນັກກິລາຈໍານວນໜຶ່ງ ທີ່ໄດ້ ມີການເຄື່ອນໄຫວພື້ນເດັ່ນ ໃນລາຍການແຂ່ງຂັນປະຈໍາປີ ການເຂົ້າຮ່ວມງານມະຫາກໍາກິລາແຫ່ງຊາດ ຄັ້ງທີ 11, ນອກນັ້ນຍັງມີນັກກິລາເຊື້ອຊາດລາວ ຈາກປະເທດຝຼັ່ງ ແລະ ອາເມລິກາ ຈໍານວນໜຶ່ງ ທີ່ມີຄວາມຕື່ນຕົວ ແລະ ມີຄວາມສະໝັກໃຈ ມາເປັນຕົວແທນໃຫ້ທີມຊາດລາວ ເພື່ອສ້າງກຽດຊື່ສຽງ ໃຫ້ບັນພະບຸລຸດສາຍເລືອດຕົນເອງ ຈຶ່ງໄດ້ເປັນເອກະພາບ ຂໍອະນຸມັດສົ່ງຄະນະກິລາລາວເຂົ້າຮ່ວມແຂ່ງຂັນງານມະຫາກໍາກິລາຊີເກມ ຄັ້ງທີ 32 ທີ່ຣາຊ ອານາຈັກກໍາປູເຈຍ ຈໍານວນ 31 ປະເພດກິລາ ຊຶ່ງມີຈໍານວນພົນເຂົ້າຮ່ວມຈໍານວນທັງໝົດ 645 ຄົນ ໃນນີ້ມີຄະນະ ນໍາ 17 ທ່ານ, ກອງເລຂາ 11 ທ່ານ, ແພດ 4 ທ່ານ, ບັນດາແຂກ ແລະ ຜູ້ໃຫ້ການສະໜັບສະໜຸນ 75 ທ່ານ, ຜູ້ຈັດການທີມ ແລະ ຄູຝຶກ 164 ທ່ານ, ນັກກິລາ 538 ຄົນ (ເປັນຍິງ 150) ໂດຍແບ່ງອອກເປັນ 03 ໝວດ ຄື :

ໝວດທີ 01 : ປະເພດກິລາທີ່ໄດ້ນໍາໃຊ້ງົບປະມານຂອງລັດຮອບດ້ານມີ 19 ປະເພດ ຄື :

1. ເປຕັ້ງ, 2. ໂອວິນາມ, 3. ກະຕໍ້, 4. ຢູໂດ, 5. ຄິກບອກຊິ່ງ, 6. ວູຊູ, 7. ມວຍກຸນຂະແມ, 8. ລິດຖິບ, 9. ບິລຽດ-ສະນຸກເກີ້, 10. ກາຣາເຕໂດ, 11. ມວຍປໍ້າ, 12. ປັນຈັກຊີລັດ, 13. ເທຄວັນ ໂດ, 14. ມວຍສາກົນ, 15. ເທັນນິດ, 16. ແລ່ນ-ລານ, 17. ລອຍນໍ້າ , 18. ຍົກນໍ້າໜັກ ແລະ 19. ຈູຈິດສູ.

ໝວດທີ 02 : ປະເພດກິລາທີ່ໄດ້ຮັບການສະໜັບສະໜຸນຊ່ວຍເຫຼືອ ຈາກຣາຊອານາຈັກກໍາປູເຈຍ (ເຈົ້າພາບ) ຈໍານວນ 04 ປະເພດກິລາ ຄື :

1. ກິລາມວຍກຸນບົກກະຕໍ ເຈົ້າພາບຊ່ວຍເຫຼືອຮັບເອົານັກກິລາໄປເກັບຕົວຝຶກຊ້ອມ ຢູ່ຣາຊອານາຈັກ ກໍາປູເຈຍໄລຍະເວລາ 90 ວັນ ໂດຍຮັບຜິດຊອບຄ່າທີ່ພັກ-ອາຫານ ແລະ ຄູຝຶກ;
2. ກິລາມວຍປໍ້າ ເຈົ້າພາບຊ່ວຍເຫຼືອ ຮັບຜິດຊອບຄ່າປີ້ຍົນເດີນທາງ ໄປ-ກັບ ເພື່ອໃຫ້ນັກກິລາໄປເກັບຕົວ ຝຶກຊ້ອມ ແລະ ແຂ່ງຂັນ ຢູ່ຣາຊອານາຈັກກໍາປູເຈຍ ໄລຍະເວລາ 30 ວັນ;
3. ກິລາໝາກເສີກ Ouk chatrang ເຈົ້າພາບຮັບຜິດຊອບຊ່ວຍເຫຼືອຄ່າເດີນທາງປີ້ຍົນ ໄປ-ກັບ ໃນການ ເຂົ້າຮ່ວມແຂ່ງຂັນທົດສອບ ແລະ ເຂົ້າຮ່ວມແຂ່ງຂັນກິລາຊີເກມ;
4. ກິລາຂ້າມສິ່ງກີດຂວາງ ເຈົ້າພາບ ແລະ ປະເທດຟິລິບປິນ ຮັບຜິດຊອບຊ່ວຍເຫຼືອຄ່າປີ້ຍົນເດີນທາງ ໄປ-ກັບ ແລະ ທີ່ພັກ-ອາຫານ.

ໝວດທີ 03 : ປະເພດກິລາທີ່ສະຫະພັນກຸ້ມຕົນເອງຮອບດ້ານມີ 09 ປະເພດ ຄື :

1. ບານເຕະ (ຍິງ-ຊາຍ), 2. ກອຟ, 3. ດອກປີກໄກ່, 4. ຊ໊ອຟເທັນນິດ, 5. ປິ່ງປ່ອງ, 6. ບານບ້ວງ, 7. ອິສະປອດ, 8. ຟັນດາບ ແລະ 9. ບານສົ່ງຫາດຊາຍ.

Scanned with CamScanner

II. ຜົນສຳເລັດການເຂົ້າຮ່ວມໃນງານມະຫາກຳກິລາຊີເກມຄັ້ງທີ 32 :

1. ຜົນສຳເລັດ:

ການເຂົ້າຮ່ວມແຂ່ງຂັນ ງານມະຫາກຳກິລາຊີເກມ ຄັ້ງທີ 32 ທີ່ຣາຊອານາຈັກກຳປູເຈຍ ເປັນເຈົ້າພາບ ປີ 2023 ຄະນະນຳ, ຄູຝຶກ ແລະ ນັກກິລາທີມຊາດລາວ ສາມາດບັນລຸຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້ ຊຶ່ງຍາດໄດ້ຈຳນວນ ທັງໝົດ 88 ຫຼຽນ ຄື : 6 ຫຼຽນຄຳ, 22 ຫຼຽນເງິນ ແລະ 60 ຫຼຽນທອງ ຈັດຢູ່ໃນອັນດັບທີ 9 ໃນ 11 ປະເທດເຂົ້າຮ່ວມ ລາຍລະອຽດຕາຕະລາງທີ່ໄດ້ຄັດຕິດມາພ້ອມນີ້ :

ລ/ດ	ປະເພດກິລາ	ປະເພດຫຼຽນ			ລວມ
		ຄຳ	ເງິນ	ທອງ	
1	ເປຕັ້ງ	3	2	4	9
2	ກະຕໍ້ ແລະ ຊີນລອນ	1	4	7	12
3	ກຸນ ໂບກະຕໍ້	1	1	10	12
4	ໂວວິນາມ	1	1	5	7
5	ກຸນ ຂະແມ	0	5	7	12
6	ຢູໂດ	0	3	1	4
7	ບີລຽດ ສະປອດ	0	2	0	2
8	ມວຍປ້ຳ	0	1	7	8
9	ເທຄວັນໂດ	0	1	2	3
10	ຄີກບ໊ອກຊິ່ງ	0	1	1	2
11	ຈູຈິດສຸ	0	1	0	1
12	ຊ໊ອຟ ເຕັນນິດ	0	0	3	3
13	ມວຍສາກົນ	0	0	3	3
14	ຈູຊູ	0	0	3	3
15	ກາຣາເຕໂດ	0	0	2	2
16	ສິ່ງກິດຂວາງ	0	0	1	1
17	ປັນຈັກສິລັດ	0	0	1	1
18	ດອກປີກໄກ່	0	0	1	1
19	ອີສະປອດ	0	0	1	1
20	ຍົກນ້ຳໜັກ	0	0	1	1
ລວມຫຼຽນທັງໝົດ		6	22	60	88

2. ຕີລາຄາຜົນສຳເລັດ :

ການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 32 ຂອງຄະນະນັກກິລາລາວໃນຄັ້ງນີ້ ສາມາດຍາດໄດ້ຜົນສຳເລັດເກີນຄາດໝາຍທີ່ວາງໄວ້ຢ່າງສົມບຸນແບບ ເປັນທີ່ໜ້າເພິ່ງພໍໃຈ ນຳກຽດ ແລະ ຊື່ສຽງມາສູ່ປະເທດຊາດ ແລະ ປະຊາຊົນລາວຊົນບັນດາເຜົ່າໄດ້ ດ້ວຍຄວາມເອກອ້າງທະນົງໃຈ. ຖ້າທຽບໃສ່ຜົນສຳເລັດໃນຄັ້ງລ່າສຸດ ໃນການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 31 ປີ 2022 ທີ່ ປະເທດ ສສ ຫວຽດນາມ ຍາດໄດ້ຫຼຽນລວມທັງໝົດພຽງແຕ່ 42 ຫຼຽນ ຄື : 02 ຫຼຽນຄຳ, 07 ຫຼຽນເງິນ ແລະ 33 ຫຼຽນທອງ. ຜົນສຳເລັດການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 32 ປີ 2023 ໃນຄັ້ງນີ້ ຍາດໄດ້ຫຼຽນທັງໝົດ 88 ຫຼຽນ ໃນນີ້ຫຼຽນຄຳ 06 ຫຼຽນ, ຫຼຽນເງິນ 22 ຫຼຽນ ແລະ ຫຼຽນທອງ 60 ຫຼຽນ ເປັນໂອກາດເຮັດໃຫ້ຫຼຽນລວມເພີ່ມຂຶ້ນທັງໝົດ 46 ຫຼຽນ, ຫຼຽນຄຳເພີ່ມຂຶ້ນ 04 ຫຼຽນ, ຫຼຽນເງິນເພີ່ມຂຶ້ນ 15 ຫຼຽນ ແລະ ຫຼຽນທອງເພີ່ມຂຶ້ນ 18 ຫຼຽນ, ນັ້ນໄດ້ສ່ອງແສງໃຫ້ເຫັນເຖິງການພັດທະນາມີທ່າກ້າວດີຂຶ້ນ ເຖິງແມ່ນວ່າການກະກຽມ ໄດ້ໃຊ້ເວລາໜ້ອຍກໍຕາມ ແຕ່ຍ້ອນຄວາມຕໍ່ເນື່ອງຈາກກິລາຊີເກມຄັ້ງກ່ອນ ຕໍ່ໃສ່ງານມະຫາກຳກິລາແຫ່ງຊາດ ແລະ ການແຂ່ງຂັນລາຍການອື່ນໆ

Scanned with CamScanner

ເຮັດໃຫ້ຄູຝຶກ ແລະ ນັກກິລາທີມຊາດ ໄດ້ຝຶກຝົນຕົນເອງຢ່ຕະຫຼອດເວລາ ແລະ ສາມາດເກັບກ່ຽວປະສົບການ ຈົນນຳເອົາໄຊຊະນະມາສູ່ປະເທດຊາດໃນຄັ້ງນີ້ໄດ້ຢ່າງສົມກຽດ.

ຜົນສຳເລັດທີ່ໜ້າເພິ່ງພໍໃຈ ໃນການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 32 ໃນຄັ້ງນີ້, ຍາດມາ ໄດ້ກໍ່ຍ້ອນ ໄດ້ຮັບຄວາມເອົາໃຈໃສ່ຊີ້ນຳ-ນຳພາ ຂອງ ລັດຖະບານແຫ່ງ ສປປ ລາວ, ການນຳກະຊວງສຶກສາທິການ ແລະ ກິລາ, ຄະນະກຳມະການໂອແລມປິກແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດ ທີ່ໄດ້ມີຍຸດທະສາດທີ່ດີ, ສອດຄ່ອງເໝາະສົມຕາມເງື່ອນໄຂສະພາບຄວາມເປັນຈິງ ແລະ ກ່ອນໜ້າທີ່ຄະນະກິລາລາວ ຈະເດີນທາງເຂົ້າຮ່ວມ ງານແຂ່ງຂັນກິລາຊີເກມ ກໍໄດ້ຮັບກຽດໂອ້ລົມຈາກ ທ່ານ ຮອງນາຍົກລັດຖະມົນຕີ. ພິເສດ ກ່ອນພິທີເປີດງານມະຫາ ກຳກິລາຊີເກມ ເນື່ອງໃນໂອກາດທີ່ ທ່ານ ປະທານປະເທດແຫ່ງ ສປປ ລາວ ໄດ້ໄປຢ້ຽມຢາມລັດຖະກິດ ທີ່ຣາຊ ອານາຈັກກຳປູເຈຍ, ທ່ານ ປະທານປະເທດ ໄດ້ສະຫຼະເວລາ ໃຫ້ກຽດໂອ້ລົມ ຄະນະກິລາລາວ ເພື່ອໃຫ້ທິດຊີ້ນຳ ແລະ ກະຕຸກຊຸກຍູ້ນັກກິລາ ຢ່ໝູ່ບ້ານນັກກິລາ ທີ່ຣາຊອານາຈັກກຳປູເຈຍ.

ໃນການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ໃນຄັ້ງນີ້ ທາງດ້ານພາກສ່ວນທີ່ກຽວຂ້ອງ ແລະ ສັງຄົມ, ຄູຝຶກ ແລະ ນັກກິລາ ທີ່ໄດ້ຮ່ວມແຮງຮ່ວມໃຈ, ສາມັກຄີ, ຕັ້ງໜ້າສູ້ຊົນ ແລະ ເສຍສະລະອິດທົນເພື່ອຊາດຮ່ວມກັນ. ນອກນັ້ນ, ຍ້ອນມີສາຍພົວພັນອັນດີກັບ ປະເທດເຈົ້າພາບ, ເພື່ອນມິດສາກົນ ແລະ ອົງການຈັດຕັ້ງກິລາຂອງອານຸ ພາກພື້ນ, ພາກພື້ນ ແລະ ສາກົນ ທີ່ໄດ້ໃຫ້ການຊ່ວຍເຫຼືອ ສປປ ລາວ ໃນດ້ານຕ່າງໆ ໃນການເຂົ້າຮ່ວມຄັ້ງນີ້.

ແຕ່ເຖິງຢ່າງໃດກໍດີ ພວກເຮົາຕ້ອງໄດ້ທົບທວນຄືນກ່ຽວກັບບາງບັນຫາ ແລະ ສິ່ງທ້າທາຍ ທີ່ເປັນອຸປະສັກ ຢ່າງໃຫຍ່ຫຼວງໃຫ້ກັບການພັດທະນາກິລາໃນ ສປປ ລາວ ໃຫ້ທຽບເທົ່າກັບມາດຕະຖານຂອງອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ :

1. ຂໍ້ສະດວກ :
   1) ການນຳຂັ້ນສູງຂອງພັກ ແລະ ລັດ ໄດ້ໃຫ້ການຊີ້ນຳຢ່າງໃຫ້ຊິດຕິດແທດ;
   2) ລັດຖະບານໄດ້ສະໜອງງົບປະມານຮັບໃຊ້ໃຫ້ແກ່ຄະນະກິລາລາວ ເພື່ອກະກຽມເຂົ້າຮ່ວມງານແຂ່ງຂັນ ກິລາຊີເກມ ຄັ້ງທີ 32 ທັນຕາມກຳນົດເວລາ ໂດຍສະເພາະແມ່ນອັດຕາກິນ ແລະ ເງິນແຮງງານຂອງນັກ ກິລາ;
   3) ຄະນະຮັບຜິດຊອບທີ່ໄດ້ຖືກແຕ່ງຕັ້ງ ຮ່ວມກັບ ກົມກິລາລະດັບສູງ, ຄະນະກຳມະການໂອແລມປິກ ແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດລາວ ແລະ ຄະນະຮັບຜິດຊອບແຕ່ລະຂັ້ນ ໄດ້ປຸ້ມລຸ້ມ ສຸມທຸກສະຕິປັນຍາ ແລະ ເຮື່ອແຮງໃນການຈັດຕັ້ງໜ້າວຽກຂອງໃຜລາວ;
   4) ກະຊວງປ້ອງກັນປະເທດ ໄດ້ຊ່ວຍສະໜັບສະໜຸນໃນການໄປຮັບ-ໄປສົ່ງນັກກິລາທີມຊາດ ໂດຍນຳໃຊ້ ຍົນຂອງກອງທັບ, ອີກສ່ວນໜຶ່ງໄດ້ເດີນທາງ ທາງລົດໂດຍເຈົ້າພາບໄປສົ່ງຢ່ຊາຍແດນ;
   5) ຄະນະນຳ, ຄູຝຶກ ແລະ ນັກກິລາ ໄດ້ຕັ້ງໜ້າ, ບຸກບືນ ແລະ ມີຄວາມເສຍສະຫຼະຢ່າງສູງສົ່ງ ໃນ ການຈັດຕັ້ງປະຕິບັດວຽກງານ, ການຝຶກແອບ ແລະ ແຂ່ງຂັນ;
   6) ກະຊວງການຕ່າງປະເທດ, ແນວລາວສ້າງຊາດ, ກະຊວງປ້ອງການຄວາມສະຫງົບ, ສະຖານທຸດຂອງ ສປປ ລາວ ປະຈຳປະເທດຕ່າງໆ ໄດ້ອຳນວຍຄວາມສະດວກໃນການດຳເນີນແລ່ນເອກະສານ ແລະ ການເດີນທາງຂອງນັກກິລາເຊື້ອຊາດລາວເຂົ້າຮ່ວມ;
   7) ນັກກິລາເຊື້ອຊາດລາວ ມີຄວາມສະໝັກໃຈເຂົ້າແຂ່ງຂັນ ໂດຍນຳໃຊ້ຄ່າໃຊ້ຈ່າຍຂອງຕົນເອງ ແລະ ມີ ການປະກອບສ່ວນຈຳນວນໜຶ່ງຈາກພາກລັດ;

Scanned with CamScanner

8) ປະເທດເຈົ້າພາບໄດ້ອຳນວຍຄວາມສະດວກ ແລະ ຕ້ອນຮັບຂັບສູ່ຄະນະກິລາລາວ ເຂົ້າຮ່ວມການແຂ່ງຂັນເກມຄັ້ງນີ້ ເປັນຢ່າງດີ;

9) ໄດ້ຮັບການສະໜັບສະໜຸນຈາກພາກສ່ວນ ບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງ ພາຍໃນ ແລະ ຕ່າງປະເທດ ໃນໄລຍະກະກຽມ, ແຂ່ງຂັນ ແລະ ຫຼັງການແຂ່ງຂັນ. ພິເສດຄັ້ງນີ້ ຄະນະບໍລິຫານງານໂອແລມປິກແຫ່ງຊາດລາວ ໄດ້ຫາເງິນອັດສິດໃຫ້ກັບນັກກິລາ ເຮັດໃຫ້ນັກກິລາມີກຳລັງໃຈ ໃນການແຂ່ງຂັນກິລາ ໃນຄັ້ງນີ້.

2. <u>ຂໍ້ຫຍຸ້ງຍາກ</u> :

1) ນັກກິລາ ຫຼາຍປະເພດກິລາທີ່ເຂົ້າຮ່ວມຄັ້ງນີ້ ຍັງໜຸ່ມນ້ອຍ ແລະ ຂາດປະສົບການ ໃນການແຂ່ງຂັນ ນອກນອກ ຄູຝຶກທີ່ຖືກແຕ່ງຕັ້ງ ບາງປະເພດກິລາຍັງຂາດຄວາມຮູ້ດ້ານວິທະຍາສາດການຝຶກສອນ;

2) ບາງສະຫະພັນກິລາແຫ່ງຊາດ ຍັງບໍ່ທັນເປັນເຈົ້າການໃນການສັນຫາ ແລະ ຄັດເລືອກນັກກິລາ ທີ່ມີຄວາມສາມາດສູງ ເພື່ອມາເຂົ້າສຸມຝຶກຊ້ອມ ແລະ ເຂົ້າຮ່ວມການແຂ່ງຂັນ;

3) ບ່ອນເກັບຕົວຝຶກຊ້ອມນັກກິລາທີມຊາດ ຍັງບໍ່ທັນພຽງພໍ, ອັນທີ່ມີຢູ່ແມ່ນບໍ່ທັນໄດ້ມາດຕະຖານ, ໄລຍະການຝຶກຊ້ອມສັ້ນເກີນໄປ, ພ້ອມນັ້ນ ມີພຽງບາງສະຫະພັນກິລາເທົ່ານັ້ນທີ່ໄດ້ເຂົ້າຮ່ວມແຂ່ງຂັນທົດສອບກ່ອນການແຂ່ງຂັນເລີ່ມຕົ້ນ;

4) ສຸນຝຶກກິລາແຫ່ງຊາດ ທີ່ໃຊ້ເປັນບ່ອນເກັບຕົວຝຶກຊ້ອມນັກກິລາຜ່ານມາ ເຫັນວ່າ ຫ້ອງພັກເປ່ເພເສຍຫາຍຫຼາຍ ມີນ້ຳຮົ່ວຊຶມ, ບ່ອນຝຶກແອບບໍ່ພຽງພໍ (ແອອັດຫຼາຍ) ຍ້ອນຫຼາຍປະເພດກິລາເກັບຕົວ ແລະ ມີການຈັດຕັ້ງການຝຶກແອບຂອງໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ແລະ ນັກກິລາຂອງສະຖາບັນກິລາ-ກາຍຍະກຳ;

5) ຂາດງົບປະມານສະໜັບສະໜຸນໃຫ້ກັບສະຫະພັນກິລາໃນບ້ອງບໍລິຫານ ແລະ ນະໂຍບາຍແຮງງານໃຫ້ກັບຜູ້ເຮັດວຽກໃນຊ່ວງໄລຍະກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນຂອງບາງສະຫະພັນທີ່ບໍ່ສາມາດຫາຜູ້ສະໜັບສະໜຸນ;

6) ການເດີນທາງເຂົ້າຮ່ວມການແຂ່ງຂັນໃນຄັ້ງນີ້ ພົບຄວາມຫຍຸ້ງຍາກ ຍ້ອນວ່າສາຍການບິນລະຫວ່າງປະເທດ ມີຈຳນວນຖ້ຽວບິນໜ້ອຍ ແລະ ໄປຍົນທະຫານເໝົາລຳ ເຮັດໃຫ້ບາງປະເພດກິລາຕ້ອງໄປກ່ອນ ແລະ ກັບຊ້ຳກ່ອນກຳນົດ, ຕ້ອງໄດ້ເສຍຄ່າທີ່ພັກ ແລະ ອາຫານເພີ່ມ;

7) ການນຳໃຊ້ວິທະຍາສາດການກິລາເຂົ້າໃນການຝຶກແອບມີຄວາມຫຍຸ້ງຍາກ ໂດຍສະເພາະແມ່ນການທົດສອບສະມັດຕະພາບຮ່າງກາຍຂອງນັກກິລາ ຍ້ອນມີບາງຄະນະບໍລິຫານງານ ແລະ ຄູຝຶກ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ແລະ ບໍ່ທັນເຫັນເຖິງຄວາມສຳຄັນ.

3. <u>ບົດຮຽນທີ່ຖອດຖອນໄດ້</u> :

1) ເພີ່ມທະວີການຊີ້ນຳ-ນຳພາ ທາງດ້ານແນວຄິດການເມືອງ ໃຫ້ແກ່ຄະນະນຳ, ຄູຝຶກ ແລະ ນັກກິລາ ຢ່າງໜັກແໜ້ນ ແລະ ເປັນປົກກະຕິ;

2) ຊຸກຍູ້ໃຫ້ມີການນຳໃຊ້ວິທະຍາສາດການກິລາເຂົ້າຊ່ວຍໃນການພັດທະນາຄູຝຶກ ແລະ ນັກກິລາໃຫ້ເປັນຮູບປະທຳ ໂດຍສົມທົບກັບສະຖາບັນກິລາ-ກາຍຍະກຳ;

3) ຕອບສະໜອງງົບປະມານໃຫ້ແກ່ສະຫະພັນກິລາແຫ່ງຊາດ ທີ່ເປັນເປົ້າໝາຍໃຊ້ໃນການບໍລິຫານ, ຈັດຕັ້ງການແຂ່ງຂັນຢ່າງເປັນລະບົບ, ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ ເພື່ອໃຫ້ພວກເຂົາໄດ້ຮັບການພັດທະນາ ແລະ ຈະບໍ່ໃຊ້ເວລາຫຼາຍໃນການເກັບໂຕຝຶກແອບ;

4) ປະເພດກິລາເປົ້າໝາຍຫຼຽນຄຳ ມີຄວາມຈຳເປັນຕ້ອງໄດ້ຈ້າງຄູຝຶກ ເກດ A ລະດັບຊ່ຽວຊານ ຈາກຕ່າງປະເທດ ມາຮັບຜິດຊອບການຝຶກແອບໃຫ້ນັກກິລາ ແລະ ສົ່ງຄູຝຶກ, ນັກກິລາ ໄປແຂ່ງຂັນທົດສອບ ແລະ ເກັບໂຕຝຶກແອບຢູ່ຕ່າງປະເທດ ຈຶ່ງຈະບັນລຸຜົນສຳເລັດຕາມເປົ້າໝາຍໄດ້;

Scanned with CamScanner

5) ການຕອບສະໜອງງົບປະມານ ໃຫ້ແກ່ການກະກຽມຝຶກແອບນັກກິລາບາງປະເພດທີ່ ໃຫ້ເປັນລະບົບຕໍ່ເນື່ອງ ກ່ອນເຂົ້າຮ່ວມແຂ່ງຂັນ ຕ້ອງມີເວລາຍາວຢ່າງໜ້ອຍ 06 ເດືອນ ຂຶ້ນໄປ;
6) ຈັດກອງປະຊຸມແລກປ່ຽນຄຳຄິດ ຄຳເຫັນ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ແກ່ການຖອດຖອນບົດຮຽນ ແລະ ແຜນການປັບປຸງໃນຕໍ່ໜ້າ.

IV. ດ້ານວຽກງານງົບປະມານ :

1) ງົບປະມານຂອງລັດຖະບານ ຮັບໃຊ້ການເຂົ້າຮ່ວມຄັ້ງນີ້ ມີທັງໝົດຈຳນວນ 14.000.000.000 ກີບ;
2) ງົບປະມານຂອງລັດຖະບານ ໃຫ້ ຄ່າຫຼຽນລາງວັນ ຄູຝຶກ ແລະ ນັກກິລາລາວ ຕາມດຳລັດ 125/ນລ, ລົງວັນທີ 21 ເມສາ 2017 ວ່າດ້ວຍລະບອບນະໂຍບາຍຕໍ່ນັກກິລາ ແລະ ຄູຝຶກທີມຊາດ ມູນຄ່າ 2.506.916.400;
3) ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ໃຫ້ຄ່າຫຼຽນລາງວັນໃຫ້ນັກກິລາລາວ ລວມມູນຄ່າ 805.000.000 ກີບ;
4) ບໍລິສັດເບຍລາວຈຳກັດ ໃຫ້ຄ່າຫຼຽນລາງວັນໃຫ້ນັກກິລາລາວ ລວມມູນຄ່າ 300.000.000 ກີບ;
5) ສະຫະພັນກິລາບານເຕະແຫ່ງຊາດ ໃຊ້ງົບປະມານຕົນເອງໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນ ລວມມູນຄ່າ..230.000 ໂດລາ.....
6) ບັນດາສະຫະພັນກິລາແຫ່ງຊາດ ໄດ້ຮັບການສະໜັບສະໜຸນ ຈາກບຸກຄົນ, ນິຕິບຸກຄົນ ແລ ບໍລິສັດຕ່າງໆ ໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 32 ລວມເປັນເງິນກີບມູນຄ່າ 4.099.319.000 ກີບ ແລະ ເງິນໂດລາມູນຄ່າ 79.425 ໂດລາ (ຕາມເອກະສານຊ້ອນທ້າຍ).

V. ຂໍ້ສະເໜີ :

1) ສະເໜີຍ້ອງຍໍ ໃຫ້ ນັກກິລາ ແລະ ຄູຝຶກ ທີ່ຍາດໄດ້ຫຼຽນຕ່າງໆ ຕາມດຳລັດ 125/ນລ, ລົງວັນທີ 21 ເມສາ 2017 ວ່າດ້ວຍລະບອບນະໂຍບາຍຕໍ່ນັກກິລາ ແລະ ຄູຝຶກທີມຊາດ, ພິເສດສະເໜີຍ້ອງຍໍຄະນະນຳສະຫະພັນກິລາແຫ່ງຊາດປະເພດຕ່າງໆ ຄືກັນກັບນັກກິລາ ແລະ ຄູຝຶກໄດ້ຮັບ;
2) ສະເໜີຍ້ອງຍໍລວມໝູ່ໃຫ້ກັບສະຫະພັນກິລາແຫ່ງຊາດ, ຄະນະກຳມະການໂອແລມປິກແຫ່ງຊາດລາວ, ກິລາລະດັບສູງ ທີ່ມີຜົນສຳເລັດ ເຮັດໃຫ້ນັກກິລາຍາດໄດ້ຫຼຽນ ລະດັບຄືກັນກັບນັກກິລາ ແລະ ຄູຝຶກທີ່ໄດ້ຮັບ;
3) ສະເໜີຍ້ອງຍໍ ບຸກຄົນ, ນິຕິບຸກຄົນ, ບັນດາບໍລິສັດ ແລະ ການຈັດຕັ້ງ ທີ່ປະກອບສ່ວນ ໃຫ້ການສະໜັບສະໜຸນ ຕາມມູນຄ່າການອຸປະຖຳ (ມີເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລ ເພື່ອຮັບຊາບ ແລະໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າກົມ

ຄວງພອນ ພິຍາມາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ 216 /ກສ
ນະຄອນຫຼວງວຽງຈັນ, ວັນທີ 24 ພຶດສະພາ 2023

ນັກກິລາທີມຊາດລາວ ທີ່ຍາດໄດ້ຫຼຽນຄຳ, ຫຼຽນເງິນ ແລະ ຫຼຽນທອງ
ໃນງານມະຫາກຳກິລາຊີເກມ ຄັ້ງທີ 32 ທີ່ ຣາຊອານາຈັກກຳປູເຈຍ
The 32nd Sea Games in the Cambodia 05-17 May 2023

ລ/ດ	ປະເພດກິລາ	ລາຍການແຂ່ງຂັນ	ຊື່ ແລະ ນາມສະກຸນ	ປະເພດຫຼຽນ
I.	ນັກກິລາຫຼຽນຄຳ :			06 ຫຼຽນ
1	ເປຕັ໋ງ	ຊຸດຕີ໋ງ ຊາຍ	ທ້າວ ພຸດທະລາ ແກ້ວກັນນິກາ	ຫຼຽນຄຳ
		ຄູ່ຍິງ	ນາງ ອາລີ ແສງຈັນເພັດ ແລະ	ຫຼຽນຄຳ
			ນາງ ຈິນດາວອນ ສີສະຫວັດ	
		ທີມປະສົມ (ຊາຍ2 ຍິງ1)	ນາງ ນິດາວັນ ດວງມະນີຈັນ	ຫຼຽນຄຳ
			ທ້າວ ສົມສະໄໝ ຊາມົນຕີ	
			ທ້າວ ວິລະສັກ ລາດ່ະວົງ	
2	ຊິນລອນ	Event 3 ທີມຊາຍ	ທ້າວ ພອນສະຫວັນ ພິມມະຈັກ	ຫຼຽນຄຳ
			ທ້າວ ໂຍທິນ ສົມບັດພຸທອນ	
			ທ້າວ ອານຸສອນ ສຸນດາລາ	
			ທ້າວ ອຸ່ນຄຳ ໄຊສົງຄາມ	
			ທ້າວ ອາດິງ ຜຸ້ມີສົນ	
			ທ້າວ ແອດໂລ ພົນບຸນ	
			ທ້າວ ປາໂມດ ອິນທິລາດລັງສີ	
			ທ້າວ ສຸກນິລັນ ໄຊກົງສາ	
3	ກຸນຢິກກະຕໍ	Men Singer Bare Hand Form	ທ້າວ ກອງເງິນ ອິນທິສານ	ຫຼຽນຄຳ
4	ໂວວິນາມ	ປະເພດສະແດງຄູ່ຊາຍ ມີ ອຸປະກອນ	ທ້າວ ຈັນທະລັງສີ ຈັນທະສິດາ	ຫຼຽນຄຳ
			ທ້າວ ພຸດທະສິນ ປ່ຽງປັນຍາ	
II.	ນັກກິລາຫຼຽນເງິນ :			22 ຫຼຽນ
1	ເປຕັ໋ງ	ດ່ຽວຊາຍ	ທ້າວ ບຸນຕາມີ ສຸທຳມະວົງ	ຫຼຽນເງິນ
		ທີມຊຸດຍິງ	ນາງ ບຸດສະດີ ແສງມະນີ	ຫຼຽນເງິນ
			ນາງ ໄກ່ທອງ ແກ້ວພິລາ	
			ນາງ ນອນນີ ພັນທະລີ	

Scanned with CamScanner

			ນາງ ປົນມະນີ ວົງສີ	
2	ຊຸນລອນ	Event 1 ທີມປະສົມ	ທ້າວ ອາດິງ ຜຸ້ມີສິນ	ຫຼຽນເງິນ
			ທ້າວ ແອດໂລ ພົນບຸນ	
			ທ້າວ ອານຸສອນ ສຸນດາລາ	
			ທ້າວ ໂຍທິນ ສົມບັດພຸທອນ	
			ນາງ ພິລາວັນ ຈັນທະສີລີ	
			ນາງ ສຸກຖາວອນ ດວງຕາ	
			ນາງ ສັນຕິສຸກ ຈັນດາລາ	
			ນາງ ສອນອຳໄພ ສຸວົນທອນ	
		Event 3 ທີມປະສົມ	ທ້າວ ອາດິງ ຜຸ້ມີສິນ	ຫຼຽນເງິນ
			ທ້າວ ອານຸສອນ ສຸນດາລາ	
			ທ້າວ ອຸ່ນຄຳ ໄຊສົງຄາມ	
			ນາງ ລັດສະໝີ ວິໄລສຸກ	
			ນາງ ເມ ເພຍເທບ	
			ນາງ ພິລາວັນ ຈັນທະສີລີ	
			ນາງ ອັນສອນ ບົວວ່າງ	
			ທ້າວ ໂຍທິນ ສົມບັດພຸທອນ	
		Event 4 ທີມຊາຍ	ທ້າວ ປາໂມດ ອິນທິລາດວົງສີ	ຫຼຽນເງິນ
			ທ້າວ ພອນສະຫວັນ ພົມມະຈັກ	
			ທ້າວ ສຸກນິລັນ ໄຊກົງສາ	
			ທ້າວ ອາດິງ ຜຸ້ມີສິນ	
			ທ້າວ ໂຍທິນ ສົມບັດພຸທອນ	
			ທ້າວ ອານຸສອນ ສຸນດາລາ	
			ທ້າວ ແອດໂລ ພົນບຸນ	
			ທ້າວ ອຸ່ນຄຳ ໄຊສົງຄາມ	
3	ກະຕໍ້	ທີມຊຸດຍິງ	ນາງ ກ້ອຍ ໄຊຍະວົງ	ຫຼຽນເງິນ
			ນາງ ນໍ້ຄຳ ວົງໄຊ	
			ນາງ ນອນດຳ ວໍລະບຸດ	
			ນາງ ສອນສະຫວັນ ແກ້ວສຸລິຍາ	
			ນາງ ອັກສອນສະຫວັນ ພິລາວົງ	
			ນາງ ແນມ ລັດຕະນະບຸນມີ	
			ນາງ ແໜ້ ອິນທະວົງ	
			ນາງ ນ້ຳຝົນ ມໍລະດົກ	
			ນາງ ນິຊາພັດ ມາພາ	
4	ກຸນຍົກກະຕໍ	ປະເພດຕໍ່ສຸ -70ກິໂລ	ທ້າວ ດຳຊຸມພອນ ຂຽວສະຫວາດ	ຫຼຽນເງິນ
5	ໂວວິນາມ	ປະເພດຕໍ່ສຸ -55 Kg	ນາງ ອາລິສາ ປັນຍາສິລີ	ຫຼຽນເງິນ
6	ກຸນຂະແມ	ໄຫວ້ຄູ-ຊາຍ	ທ້າວ ຄຳຫຼ້າ ສາມະນີວົງ	ຫຼຽນເງິນ
		ປະເພດຕໍ່ສຸ -45ກິໂລ	ນາງ ມະນີວັນ ສີສຸບັນທອງ	ຫຼຽນເງິນ
		ປະເພດຕໍ່ສຸ -54ກິໂລ	ທ້າວ ສຸກນາ ແກ້ວຕະຫຼາດ	ຫຼຽນເງິນ
		ລຸ້ນນ້ຳໜັກ -60ກິໂລ	ທ້າວ ອັດຕະໄຊ ສີຫານຸດ	ຫຼຽນເງິນ

Scanned with CamScanner

		ລຸ້ນນ້ຳໜັກ -63,5ກິໂລ	ທ້າວ ສຸບິນ ບັນຊາເດດ	ຫຼຽນເງິນ
7	ຢຸໂດ	ຝ້ອນກະຕະຊາຍ	ທ້າວ ວຽງວິໄລ ຈັນສີ	ຫຼຽນເງິນ
			ທ້າວ ຈິນດາວອນ ສີວັນວິໄລ	
		ນ້ຳໜັກບໍ່ເກີນ 60 ກິໂລ	ທ້າວ ສຸກພະໄຊ ສິດທິສານ	ຫຼຽນເງິນ
		ນ້ຳໜັກບໍ່ເກີນ 44 ກິໂລ	ນາງ ເກສອນ ອ້ອນວິໄລ	ຫຼຽນເງິນ
8	ປິລຽດ-ສະນຸກເກີ	ດ່ຽວຊາຍ	ທ້າວ ສິດທິເດດ ສັກປ່ຽງ	ຫຼຽນເງິນ
		ສະນຸກເກີ 6 ແດງ ຄູ່ຊາຍ	ທ້າວ ສິດທິເດດ ສັກປ່ຽງ	ຫຼຽນເງິນ
			ທ້າວ ສຸລິຍາ ມິນາລາວົງ	
9	ເທຄວັນໂດ	ຕ່ຳສຸ +73ກິໂລ	ນາງ ສອນສະຫວັນ ສີລິມະໂນທຳ	ຫຼຽນເງິນ
10	ຈຸຈິດສຸ	ປະເພດຕ່ຳສຸ -69 Kg	Mr Slayman Jedidiah PHOMSAVATH	ຫຼຽນເງິນ
11	ຄິກບອກຊິ້ງ	Full Contact 60ກິໂລ	ທ້າວ ສຸກັນ ໄຕປັນຍາວົງ	ຫຼຽນເງິນ
12	ມວຍປ້ຳ	Free Style 70ກິໂລ	ທ້າວ ດຣ໌ສັນ ສະຕິເຝນ ສີຫາວົງ	ຫຼຽນເງິນ
III.	ນັກກິລາຫຼຽນທອງ (ແດງ) :			60 ຫຼຽນ
1	ເປຕັ້ງ	ດ່ຽວຍິງ	ນາງ ສຸກສະດາ ສີລິຈັນ	ຫຼຽນທອງ
		ຄູ່ປະສົມ (ຊາຍ-ຍິງ)	ນາງ ນ້ອຍ ມະນີທອນ	ຫຼຽນທອງ
			ທ້າວ ຕິງຊັນ ແກ້ວກັນນິກາ	
		ທີມຊຸດປະສົມ (ຍິງ2 ຊາຍ1)	ນາງ ໂຍວິລັກ ເທບພະກັນ	ຫຼຽນທອງ
			ນາງ ມະນີວັນ ສຸລິຍາ	
			ທ້າວ ຫຼ້າ ຫງຽນມະນີ	
		ທີມຊຸດຊາຍ	ທ້າວ ຄະລຸຍ ເຜັດວາລີ	ຫຼຽນທອງ
			ທ້າວ ເຄນທອງ ອຸ່ນນາລົມ	
			ທ້າວ ໄມສັນ ວິພາກອນ	
			ທ້າວ ຜຸດສະໜາ ລ້ານວົງເຮັ່ງ	
		Event 1 ທີມຊາຍ	ທ້າວ ພອນສະຫວັນ ພິມມະຈັກ	ຫຼຽນທອງ
			ທ້າວ ໂຍທິນ ສົມບັດພູທອນ	
			ທ້າວ ອານຸສອນ ສຸນດາລາ	
			ທ້າວ ລັດສະໝີ ຊາມຸນຕີ	
			ທ້າວ ອາດິງ ຜຸ້ມີສິນ	
			ທ້າວ ແອດໂລ ພົນບຸນ	
			ທ້າວ ສຸກນິລັນ ໄຊກົງສາ	
			ທ້າວ ປາໂມດ ອິນທິລາດວົງສີ	
		Event 1 ທີມຍິງ	ນາງ ດຳດອນ ລັດຕະນະວົງສາ	ຫຼຽນທອງ
			ນາງ ລັດສະໝີ ວິໄລສຸກ	
			ນາງ ເມ ເພຍເທບ	
			ນາງ ພິລາວັນ ຈັນທະສີລີ	
			ນາງ ສັນຕິສຸກ ຈັນດາລາ	
			ນາງ ສອນອຳໄພ ສຸລິນທອນ	
			ນາງ ສຸກຖາວອນ ດວງຕາ	
			ນາງ ວັນສອນ ບົວວ່າງ	

Scanned with CamScanner

2	ຊິນລອນ	Event 2 ທີມປະສົມ	ທ້າວ ອານຸສອນ ສຸນດາລາ	ຫຼຽນທອງ
			ທ້າວ ອາດິງ ຜຸ້ມີສິນ	
			ທ້າວ ພອນສະຫວັນ ພົມມະຈັກ	
			ທ້າວ ໂຍທິນ ສົມບັດພຸທອນ	
			ນາງ ດຳດວນ ລັດຕະນະວົງສາ	
			ນາງ ລັດສະໝີ ວິໄລສຸກ	
			ນາງ ສຸກຖາວອນ ດວງຕາ	
			ນາງ ວັນສອນ ບົວອ່ຳ	
		Event 3 ທີມຍິງ	ນາງ ດຳດວນ ລັດຕະນະວົງສາ	ຫຼຽນທອງ
			ນາງ ລັດສະໝີ ວິໄລສຸກ	
			ນາງ ເມ ເຜຍເທບ	
			ນາງ ພິລາວັນ ຈັນທະລິສີ	
			ນາງ ສັນຕິສຸກ ຈັນດາລາ	
			ນາງ ສອນອຳໄພ ສຸລິນທອນ	
			ນາງ ວັນສອນ ບົວອ່ຳ	
			ນາງ ສຸກຖາວອນ ດວງຕາ	
		Event 2 ທີມຍິງ	ນາງ ລັດສະໝີ ວິໄລສຸກ	ຫຼຽນທອງ
			ນາງ ພິລາວັນ ຈັນທະລິສີ	
			ນາງ ດຳດວນ ລັດຕະນະວົງສາ	
			ນາງ ສຸກຖາວອນ ດວງຕາ	
			ນາງ ວັນສອນ ບົວອ່ຳ	
			ນາງ ສັນຕິສຸກ ຈັນດາລາ	
			ນາງ ເມ ເຜ່ຍເທບ	
			ນາງ ສອນອຳໄພ ສຸລິນທອນ	
3	ກະຕໍ້	ທີມຊາຍ	ທ້າວ ໜຸ່ມ ສຸວັນນະລິດ	ຫຼຽນທອງ
			ທ້າວ ສະອີເດັນ ວໍລະວົງສາ	
			ທ້າວ ກອງສີ ຢ່າງ	
			ທ້າວ ລັກສະນະໄຊ ບຸນໄພວັນ	
			ທ້າງ ຄຳເມິງ ມົນພະຈັນ	
			ທ້າວ ສົມມະນີວັນ ພະກອນຄຳ	
			ທ້າວ ບຸນຍິງ ເພັດສາຄອນ	
			ທ້າວ ຄຳເພັກ ໂສດາຣັກ	
			ທ້າວ ຕຸ້ເລ່ ໄຊຍະວົງສອນ	
		ຄູ່ຍິງ	ນາງ ກ້ອຍ ໄຊຍະວົງ	ຫຼຽນທອງ
			ນາງ ນໍ້ຄຳ ວົງໄຊ	
			ນາງ ສອນສະຫວັນ ແກ້ວສຸລິຍາ	
		Women Singer Bare Hand Form	ນາງ ສົມຫວັງ ມະນີແສງ	ຫຼຽນທອງ
		Men Singer Bokator Spirit Form	ທ້າວ ນະລິງກອນ ສຸດທິວັນນາ	ຫຼຽນທອງ

Scanned with CamScanner

4	ກຸນຍິກາກະຕໍ	Men Singer BamBoo Shield Form	ທ້າວ ອານຸສອນ ວັນນະລາດ	ຫຼຽນທອງ
		Men Singer Pkak Form	ທ້າວ ພິລາວັນ ຈັນທະກາລີ	ຫຼຽນທອງ
		ຕໍ່ສູ້ -65ກິໂລ	ທ້າວ ລາດຊະສັກ ສຸລິຍະວົງ	ຫຼຽນທອງ
		ຕໍ່ສູ້ -60ກິໂລ	ນາງ ຈອມ ທິດພະວົງ	ຫຼຽນທອງ
		Women Siger Pkak Form	ນາງ ອິນທິລາ ບຸດສົງຄຳ	ຫຼຽນທອງ
		(Team) Bare Hand Form	ທ້າວ ໄອດິນ ສິດທິນ້ອຍ	ຫຼຽນທອງ
			ທ້າວ ສົມໝາຍ ຜາງນິວົງ	
			ທ້າວ ທອງຄຸນ ວົງພັກດີ	
		Duo Perform	ທ້າວ ຄຳຮັກ ສີວົງໄຊ	ຫຼຽນທອງ
			ທ້າວ ກິດຕິຊົນ ອິນທະວົງ	
		1 Female Defenses againt 2 Men	ນາງ ກອນຕາ ຈັນເຮືອງແສງ	ຫຼຽນທອງ
			ທ້າວ ຄຳເຊ ວາ	
			ທ້າວ ດາວຄຳ ບົວພາ	
5	ໂວວິນາມ	ລຳດ່ຽວຍິງ ບໍ່ມີອຸປະກອນ	ນາງ ພຸດທິດາ ພົມມະສອນ	ຫຼຽນທອງ
		ປະເພດຕໍ່ສູ້ -60 Kg	ທ້າວ ອານັນທະສັກ ສຸລິຍະວົງ	ຫຼຽນທອງ
		ປະເພດຕໍ່ສູ້ -55ກິໂລ	ທ້າວ ຄຳ ສີສັກ	ຫຼຽນທອງ
		ລຳຄູ່ຊາຍ ບໍ່ມີອາວຸດ	ທ້າວ ໂພຄຳ ພົມມະຈັນ	ຫຼຽນທອງ
			ທ້າວ ພຸດທະສົນ ປ່ຽງປັນຍາ	
		ຝ່ອນທົ່ມຊາຍ ມີອຸປະກອນ	ທ້າວ ຈັນທະລັງສີ ຈັນທະສິດາ	ຫຼຽນທອງ
			ທ້າວ ເກດສະດາພອນ ຈັນທະສິດາ	
			ທ້າວ ພຸດທະສອນ ປ່ຽງປັນຍາ	
			ທ້າວ ກິດສະໜາ ສີສົງຄາມ	
			ທ້າວ ສາດສະດາ ພົມມະວົງ	
6	ກຸນຂະແມ	ໄຫວ້ຄູ-ຍິງ	ນາງ ມະນີວັນ ສີສຸບັນທອງ	ຫຼຽນທອງ
		ນ້ຳໜັກບໍ່ເກີນ 57 ກິໂລ	ນາງ ດວງໃຈ ຖະແຫຼງລຽບ	ຫຼຽນທອງ
		ນ້ຳໜັກບໍ່ເກີນ 54 ກິໂລ	ນາງ ສິງກາ ຈັນທະວົງ	ຫຼຽນທອງ
		ປະເພດຕີ -71 ກິໂລ	ທ້າວ ບຸນມາ ບຸດດາລາ	ຫຼຽນທອງ
		ປະເພດຕໍ່ສູ້ -60ກິໂລ	ນາງ ຄຳມາຍ ລາດສະວົງ	ຫຼຽນທອງ
		ປະເພດຕໍ່ສູ້ -45ກິໂລ	ທ້າວ ສິບຸ ບັນຊາເດດ	ຫຼຽນທອງ
		ປະເພດຕໍ່ສູ້ -51ກິໂລ	ທ້າວ ສົມບຸນ ບັນຊາເດດ	ຫຼຽນທອງ
7	ຢູໂດ	ຝ່ອນກະຕະຍິງ	ນາງ ມາຍຸລີ ພານຸວົງ	ຫຼຽນທອງ
			ນາງ ພອນວັນ ສີອຳພອນ	
8	ມວຍປ້ຳ	ລາຍການ GR 67 ກິໂລຊາຍ	ທ້າວ ດໍສັນ ສະຕິເຝນ ສີຫາວົງ	ຫຼຽນທອງ
		ລາຍການ GR 97 ກິໂລຊາຍ	ທ້າວ ວັນສະຫຼອງ ເຜຍເທບ	ຫຼຽນທອງ
		ລຸ້ນນ້ຳໜັກ -65ກິໂລ	ນາງ ໂສຜາ ທຳມະວົງ	ຫຼຽນທອງ
		ລຸ້ນນ້ຳໜັກ -68ກິໂລ	ນາງ ສຸລິຍາ ວັນມີໄຊ	ຫຼຽນທອງ
		ລຸ້ນນ້ຳໜັກ -72ກິໂລ	ນາງ ພອນໄຊ ປາວສະຫວັດ	ຫຼຽນທອງ
		Free Style 97ກິໂລ	ທ້າວ ອາຊ້ຽນ ເທບພະສຸວັນ	ຫຼຽນທອງ
		Free Style 125ກິໂລ	ທ້າວ ເລີດຊາຍ ຄຳທະມາ	ຫຼຽນທອງ
9	ເທຄວັນໂດ	ຝ່ອນດ່ຽວຍິງ	ນາງ ຍອດທິດາ ແກ່ນໂພຄຳ	ຫຼຽນທອງ

Scanned with CamScanner

[illegible]	[illegible]	ລຸ້ນນ້ຳໜັກ -80ກິໂລ	ທ້າວ ສົມສະໜຸກ ພົມມາວັນ	ຫຼຽນທອງ
10	ມວຍສາກົນ	ປະເພດຕໍ່ສຸ້ -57ກິໂລ	ທ້າວ ສີວິໄຊ ທຳມະວົງສາ	ຫຼຽນທອງ
		ປະເພດຕໍ່ສຸ້ -69ກິໂລ	ນາງ ປານີ ບຸນມີໄຊ	ຫຼຽນທອງ
		ລຸ້ນນ້ຳໜັກ 48 ກິໂລ	ທ້າວ ຄຳພຸວັນ ຄຳສະທອນ	ຫຼຽນທອງ
11	ຊອຟເທັນນິດ	ຄູ່ປະສົມ	ນາງ ປານແກ້ວ ເຕໂຊ	ຫຼຽນທອງ
			ທ້າວ ອານັນດອນ ຄຳພຸມີ	
		ຄູ່ຊາຍ	ທ້າວ ອານັນດອນ ຄຳພຸມີ	ຫຼຽນທອງ
			ທ້າວ ຫຼັງ ໄຊສົມບຸນ	
		ຄູ່ຍິງ	ນາງ ປານແກ້ວ ເຕໂຊ	ຫຼຽນທອງ
			ນາງ ກິນນາລີ ແສງຈັນ	
12	ວຸຊຸ	ຕໍ່ສຸ້ 52 ກິໂລຍິງ	ນາງ ອາລິສາ ໄຊຍະສິດ	ຫຼຽນທອງ
		ຕໍ່ສຸ້ 52 ກິໂລຊາຍ	ທ້າວ ຈັນທະກົບ ຈັນທາ	ຫຼຽນທອງ
		ຕໍ່ສຸ້ 45 ກິໂລຍິງ	ນາງ ຝົນນີ້ ອັກຄະສອນ	ຫຼຽນທອງ
13	ກາຣາເຕໂດ	ປະເພດຕໍ່ສຸ້ -84 Kg	ທ້າວ ວັດທະນາ ໄຊຍະສານ	ຫຼຽນທອງ
		ປະເພດຕໍ່ສຸ້ -61 Kg	ນາງ ວິລັດດາ ບຸບຜາວັນ	ຫຼຽນທອງ
14	ດອກປົກໄກ່	ທີມປະສົມ	ທ້າວ ນາມບຸນ ຫຼວງອາມາດ	ຫຼຽນທອງ
			ທ້າວ ພອນສັກ ໂຊກທະວີ	
			ທ້າວ ມານັດ ເພຍສຸລິນ	
			ນາງ ພຸດສະຫວັນ ດາວພະສິດ	
			ນາງ ທິດາຈັນ ສີປະເສີດ	
15	ຍົກນ້ຳໜັກ	ລຸ້ນ -45 ກິໂລ	ນາງ ບົວຄຳ ພົງຊະກອນ	ຫຼຽນທອງ
16	ປັນຈັກສີລັດ	ຕໍ່ສຸ້ຍິງ (50-55 ກິໂລ)	ນາງ ລັດດາ ພົງສາ	ຫຼຽນທອງ
17	ສິ່ງກີດຂວາງ	ທີມຊາຍ	ທ້າວ ບຸດລອດ ແກ້ວວິເສດ	ຫຼຽນທອງ
			ທ້າວ ໂດລາ ຍອຍສາຍຄຳ	
			ທ້າວ ແກ້ວອຸດອນ ວົງພະຈັນ	
			ທ້າວ ແລັດດີ ສາຍສະໝອນ	
18	ອີສະປອດ	Cross Fire	ທ້າວ ອານຸສອນ ໂຄດໃສ	ຫຼຽນທອງ
			ທ້າວ ສີລິສິນ ສີລິພອນ	
			ທ້າວ ສາຣະວຸດ ກົມມະດຳ	
			ທ້າວ ກີງແກ້ວ ທະວີໄຊ	
			ທ້າວ ເທບປີຊາ ຈິດທັດຕະລັດ	
			ທ້າວ ວົງພະຈັນ ພຸມມີທອນ	
19	ຄີກບອກຊິງ	ລຸ້ນນ້ຳໜັກ 63,5 ກິໂລ	ທ້າວ ດີມີທຣີ ກິດສີໜາ ສີລາລັກ	ຫຼຽນທອງ
	ລວມທັງໝົດ			88 ຫຼຽນ

ຫົວໜ້າກົມ

ຫົວໜ້າພະແນກພັດທະນາກີລາ

ແສງພອນ ພົນອາມາດ

ບຸນມາ ຫຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກີລາ
ກົມກີລາລະດັບສູງ

ເລກທີ 217 /ກສ
ນະຄອນຫຼວງວຽງຈັນ, ວັນທີ 24 ພິດສະພາ 2023

ສະຫຼຸບຫຼຽນລາງວັນນັກກີລາລາວເຂົ້າຮ່ວມແຂ່ງຂັນຊິເກມຄັ້ງທີ 32 ທີ່ກຳປູເຈຍ 2023

ລ/ດ	ປະເພດກີລາ	ປະເພດຫຼຽນ				ໝາຍເຫດ
		ຫຼຽນຄຳ	ຫຼຽນເງິນ	ຫຼຽນທອງ	ລວມ	
1	ເປຕັງ	3	2	4	9	
2	ກະຕໍ ແລະ ຊົນລອນ	1	4	7	12	
3	ກຸນ ໂບກະຕໍ	1	1	10	12	
4	ໂວວິນາມ	1	1	5	7	
5	ກຸນ ຂະແມ	0	5	7	12	
6	ຢຸໂດ	0	3	1	4	
7	ບີລຽດ ສະປອດ	0	2	0	2	
8	ມວຍປ້ຳ	0	1	7	8	
9	ເທຄວັນໂດ	0	1	2	3	
10	ຄິກບ່ອກຊິງ	0	1	1	2	
11	ຈຸຈິດສຸ	0	1	0	1	
12	ຊັອຟ ເຕັນນິດ	0	0	3	3	
13	ມວຍສາກົນ	0	0	3	3	
14	ວຸຊຸ	0	0	3	3	
15	ກາຣາເຕໂດ	0	0	2	2	
16	ສິງກິດຂວາງ	0	0	1	1	
17	ປັນຈັກສີລັດ	0	0	1	1	
18	ດອກປົກໄກ່	0	0	1	1	
19	ອີສະປອດ	0	0	1	1	
20	ຍົກນ້ຳໜັກ	0	0	1	1	
		6	22	60	88	

ຫົວໜ້າກົມ

ແສງພອນ ພົນອາມາດ

ຫົວໜ້າພະແນກພັດທະນາກີລາ

ບຸນມາ ທຳມະວົງ

Scanned with CamScanner